ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ທຫລ ເຜີຍແຜ່ນິຕິກຳຄຸ້ມຄອງເງິນຕາຕ່າງປະເທດ




ໃນວັນທີ 15 ກັນຍາ 2023 ນີ້, ທີ່ຫ້ອງປະຊຸມສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມເຜີຍແຜ່ນິຕິກຳຄຸ້ມຄອງເງິນຕາຕ່າງປະເທດ ຂຶ້ນ ໂດຍການເປັນປະທານຮ່ວມຂອງທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າກົມຄຸ້ມຄອງເງິນຕາຕ່າງປະເທດ ທຫລ ແລະ ທ່ານ ນ ສຸພາພອນ ສອນນາວົງ ຄະນະບໍລິຫານງານ ສຄອຊ, ມີຕາງໜ້າຈາກສະພາການຄ້າຕ່າງປະເທດປະຈຳລາວ, ສະມາຄົມນັກທຸລະກິດຕ່າງປະເທດປະຈຳລາວ, ກຸ່ມນັກທຸລະກິດຕ່າງປະເທດປະຈຳລາວ ພ້ອມດ້ວຍຕາງໜ້າຈາກພາກທຸລະກິດທຸກພາກສ່ວນເຂົ້າຮ່ວມ.



ຈຸດປະສົງຂອງການຈັດກອງປະຊຸມເຜີຍແຜ່ໃນຄັ້ງນີ້: ແມ່ນເພື່ອການເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ); ຄຳສັ່ງວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ກ່ຽວກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ສະບັບເລກທີ 677/ທຫລ. ບັນດາເອກະສານດັ່ງກ່າວໄດ້ກຳນົດລະອຽດກ່ຽວກັບກົນໄກການຄຸ້ມຄອງເງິນຕາຕ່າງປະເທດ ແລະ ໄດ້ກຳນົດທິດທາງການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດຂອງບັນດາກະຊວງ, ອົງການ, ສັງຄົມໃຫ້ມີຄວາມເປັນເອກະພາບ ເພື່ອຮັບປະກັນໃຫ້ການເຄື່ອນໄຫວເງິນຕາຕ່າງປະເທດສອດຄ່ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ.




ກອງປະຊຸມດັ່ງກ່າວແມ່ນໄດ້ດຳເນີນໄປເປັນເວລາເຄິ່ງວັນ ດ້ວຍບັນຍາກາດອັນຟົດຟື້ນ ຜູ້ເຂົ້າຮ່ວມປະກອບຄຳຄິດເຫັນເອົາໃຈໃສ່ຕິດຕາມຄົ້ນຄວ້າ ຊຶ່ງໄດ້ຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

ຂ່າວ-ພາບ: ສົມພິດ ທຳມະວົງ

*ຢູ່ເມືອງໃຊ້ເງິນກີບລາວ*